ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ: 04146 /ກພສ
ນະຄອນຫຼວງວຽງຈັນ, ວັນທີ: 23 ພຶດສະພາ 2019

# ແຈ້ງການ

**ເຖິງ** : ທ່ານຫົວໜ້າກອງຄຸ້ມຄອງພາສີ V
ຫົວໜ້າດ່ານພາສີສາກົນຂົວມິດຕະພາບ 1
ອຳນວຍການລັດວິສາຫະກິດບໍລິການສິນຄ້າຜ່ານແດນ
ບັນດາບໍລິສັດນຳເຂົ້າ ແລະ ສົ່ງອອກພາຫະນະ
ທະນາຄານການຄ້າຕ່າງປະເທດລາວມະຫາຊົນ
ທະນາຄານພັດທະນາລາວ

**ເລື່ອງ** : ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ດ່ານພາສີສາກົນຂົວມິດຕະພາບ 1

- ອີງຕາມ ບົດແນະນຳຂອງກະຊວງການເງິນ ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວ ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019.

ເພື່ອຮັບປະກັນປະສິດທິຜົນ ແລະ ຄວາມຄ່ອງຕົວໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວ ຢູ່ດ່ານພາສີສາກົນຂົວມິດຕະພາບ 1,

ກົມພາສີ ອອກແຈ້ງການ ດັ່ງນີ້:

1. ໃຫ້ເລີ່ມນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສຳລັບການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ນັບແຕ່ວັນທີ **24 ພຶດສະພາ 2019** ເປັນຕົ້ນໄປ. ໃຫ້ປະຕິບັດຕາມບົດແນະນຳຂອງກະຊວງ ການເງິນ ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018 ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ ໂດຍຂັ້ນຕອນລະອຽດ ດັ່ງນີ້:

**1.1. ການລົງທະບຽນ ແລະ ອອກລະຫັດນຳໃຊ້ລະບົບແຈ້ງພາສີປະຕູດຽວ:**

ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1, ລັດວິສາຫະກິດບໍລິການສິນຄ້າຜ່ານແດນ ແລະ ຜູ້ປະກອບການນຳເຂົ້າ ແລະ ສົ່ງອອກພາຫະນະ ສະເໜີລາຍຊື່ພະນັກງານ ທີ່ຕິດພັນກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີດຽວ ເພື່ອລົງທະບຽນໃນລະບົບ ແລະ ອອກລະຫັດຜູ້ນຳໃຊ້ໃຫ້ແກ່ພະນັກງານຂອງຕົນຢ່າງຄົບຖ້ວນ.

**1.2. ການຂໍອະນຸຍາດນຳເຂົ້າຈາກຂະແໜງການລັດທີ່ກ່ຽວຂ້ອງ:**

ມອບໃຫ້ຜູ້ປະກອບການນຳເຂົ້າ ແລະ ສົ່ງອອກພາຫະນະ ປະກອບຂໍ້ມູນ ແລະ ເອກະສານ ຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ໃນລະບົບແຈ້ງພາສີປະຕູດຽວ ເພື່ອສົ່ງໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ, ແລະ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາອະນຸມັດ.

**1.3. ການແຈ້ງຂໍ້ມູນ ແລະ ເອກະສານຂົນສົ່ງ:**

- ມອບໃຫ້ຜູ້ປະກອບການນຳເຂົ້າ ແລະ ສົ່ງອອກພາຫະນະ ແຈ້ງຂໍ້ມູນ ແລະ ເອກະສານຂົນສົ່ງສິນຄ້າ ຜ່ານລະບົບແຈ້ງພາສີປະຕູດຽວ.
- ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1 ແຕ່ງຕັ້ງ ແລະ ມອບໝາຍຄວາມຮັບຜິດຊອບໃຫ້ແກ່ເຈົ້າໜ້າທີ່ພາສີຢູ່ແຕ່ລະຈຸດ ເພື່ອນຳໃຊ້ລະບົບແຈ້ງພາສີປະຕູດຽວເຂົ້າໃນການຄຸ້ມຄອງກວດກາຂໍ້ມູນການຂົນສົ່ງ, ການນຳສິນຄ້າ ເຂົ້າ-ອອກ ສາງພັກສິນຄ້າ ແລະ ການຕິດຕາມການເກັບຮັກສາສິນຄ້າ ເປັນຕົ້ນ.

**1.4. ການແຈ້ງພາສີເປັນລາຍລະອຽດ:**

ຜູ້ແຈ້ງພາສີ ຕ້ອງປະກອບຂໍ້ມູນການແຈ້ງພາສີເປັນລາຍລະອຽດໃນລະບົບອາຊີກຸດາ. ໃນໄລຍະເລີ່ມຕົ້ນ ຜູ້ແຈ້ງພາສີ ຕ້ອງພິມໃບອະນຸຍາດຂອງຂະແໜງການກ່ຽວຂ້ອງອອກຈາກລະບົບແຈ້ງພາສີປະຕູດຽວ ແລະ ຄັດຕິດເປັນເອກະສານປະກອບການແຈ້ງພາສີເປັນລາຍລະອຽດ ເພື່ອຍື່ນໃຫ້ເຈົ້າໜ້າທີ່ພາສີດຳເນີນການກວດກາ.

**1.5. ການຊຳລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ:**

ມອບບັນດາຜູ້ປະກອບການນຳເຂົ້າ ແລະ ສົ່ງອອກສິນຄ້າປະເພດພາຫະນະ ຊຳລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ(ຄ່າທຳນຽມ, ຄ່າບໍລິການຕ່າງໆ) ແບບລວມສູນ ຜ່ານໜ່ວຍບໍລິການ ຫຼື ລະບົບເອເລັກໂຕຣນິກຕ່າງໆ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາລາວ ເຊັ່ນ: ລະບົບ SmartTax, BCEL iBanking, BCEL One, LDB Trust, LDB Corporate Banking ແລະ ອື່ນໆ.

2. ສຳລັບພາຫະນະທີ່ນຳເຂົ້າມາຮອດສາງຢູ່ດ່ານພາສີສາກົນຂົວມິດຕະພາບ 1 ກ່ອນການອອກແຈ້ງການສະບັບນີ້ ແມ່ນໃຫ້ດຳເນີນຂັ້ນຕອນການຂໍອະນຸຍາດ ແລະ ການແຈ້ງພາສີຮູບແບບເກົ່າ ໃຫ້ສຳເລັດຕາມກົດໝາຍ ແລະ ລະບຽບການກຳນົດ.
3. ພາຍຫຼັງເລີ່ມຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຖ້າຜູ້ປະກອບການໃດບໍ່ທັນໄດ້ລົງທະບຽນນຳໃຊ້ລະບົບແຈ້ງພາສີປະຕູດຽວ ແມ່ນສາມາດຈັດຕັ້ງປະຕິບັດຕາມຂັ້ນຕອນຮູບແບບເກົ່າໄດ້ ແຕ່ຜູ້ກ່ຽວຕ້ອງຊຸ້ມຊ້ຽວດຳເນີນຂັ້ນຕອນການລົງທະບຽນ ແລະ ອອກລະຫັດຜູ້ນຳໃຊ້ໂດຍໄວ ແລະ ບໍ່ໃຫ້ກາຍວັນທີ 23 ມິຖຸນາ 2019. ນັບແຕ່ວັນທີ 24 ມິຖຸນາ 2019 ເປັນຕົ້ນໄປ ທຸກການນຳເຂົ້າ ແລະ ສົ່ງອອກສິນຄ້າປະເພດພາຫະນະ ຜ່ານດ່ານພາສີສາກົນຂົວມິດຕະພາບ 1 ຕ້ອງດຳເນີນການແຈ້ງຂໍ້ມູນ ແລະ ເອກະສານຜ່ານລະບົບແຈ້ງພາສີປະຕູດຽວທັງໝົດ.
4. ແຈ້ງການສະບັບນີ້ມີຜົນສັກສິດນຳໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮກ **ຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

**ນຳສົ່ງ:**

- ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ — 1 ສະບັບ "ເພື່ອຊາບ ແລະ ປະຕິບັດ"
- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ — 1 ສະບັບ "ເພື່ອຊາບ ແລະ ປະຕິບັດ"
- ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ (LNSW) — 1 ສະບັບ "ເພື່ອຊາບ ແລະ ປະຕິບັດ"